# ບົດທີ 10

# ມູນຖານໃນສິນບັບຕິສະມາ







ຮູບທັງສອງໃບຂ້າງເທິງນີ້ສະແດງເຖິງສັນຍາລັກ.
ຮູບທັງສອງໃບຂ້າງລຸ່ມກໍສະແດງເຖິງສັນຍາລັກດ້ວຍ.







**1** ກ. ພະເຢຊູຕັ້ງຕົ້ນປ່າວປະກາດ ແຕ່ຫຼັງຈາກພະອົງຂຶ້ນສະຫວັນພວກສາວົກປ່າວປະກາດຕໍ່ໄປ. ການປ່າວປະກາດຢູ່ໃນ ລູດສະຕະຈັກກຸງໃດເປັນຕົ້ນ? ________________________

ຂ. ເລື່ອງນັ້ນບັນທຶກໄວ້ໃນບົດທີ 1-7 ຂອງພະທຳໃດ? ________________________

ຄ. ພະເຢຊູສັນຍາວ່າຈະມີພະຜູ້ຊ່ວຍສະເດັດມາຄືໃຜ? ________________________

ງ. ພະວິນຍານສະເດັດມາວັນໃດ? ________________________________________

**2** ໃຫ້ອ່ານ ກິດຈະການ 2:41

ກ. ໃນເມື່ອວັນທີ່ພະວິນຍານລົງມາມີລູກສິດໃໝ່ມາເຊື່ອຈັກຄົນ? __________________

ຂ. ຫຼັງຈາກເຂົາເຊື່ອແລ້ວ ເຂົາຮັບສິນໃດ? ____________________________________

**3** ກ. ຄຼິດສະຕະຈັກໃນກຸງໃດເລີ້ມຕົ້ນຂະຫຍາຍຂຶ້ນຕັ້ງແຕ່ວັນເພັນເຕຄໍສະເຕ? __________
ຂ. ມີປະມານຈັກຄົນເຊື່ອແລະຮັບສິນບັບຕິສະມາໃນວັນນັ້ນ? ____________________

*ສິນບັບຕິສະມາເປັນພິທີທີ່ສຳຄັນຫຼາຍໃນປະຫວັດຄຼິດສະຕະຈັກ ໃນບົດຮຽນນີ້ເຮົາຈະຮຽນແຕ່ເລື່ອງນັ້ນ.*

**4** ໃຫ້ທ່ານເບິ່ງຮູບ ໜ້າປົກບົດທີ 10 ນີ້. ໃນຮູບ ກ ແລະ ຂ ນັ້ນ
ຮູບໃດສະແດງເຖິງການເປັນມິດສະຫາຍກັນ? ______________________________
ຮູບໃດສະແດງເຖິງການແຕ່ງງານເປັນຜົວເມຍກັນ? ___________________________

**5** ກ. ການຈັບມືກັນເປັນສັນຍາລັກທີ່ສະແດງເຖິງຫຍັງ? ___________________________
ຂ. ແຫວນນັ້ນເປັນສັນຍາລັກທີ່ສະແດງເຖິງຫຍັງ? ______________________________

**6** ຮູບ _ "ກ" ແລະ "ຂ"ເປັນສັນຍາລັກທີ່ສະແດງເຖິງຄວາມສຳພັນລະຫວ່າງຄົນກັບຄົນ. ເຊັ່ນດຽວກັນສິນບັບຕິສະມາແລະ ສິນມະຫາສະໜິດເປັນ _______________ ທີ່ສະແດງເຖິງຄວາມສຳພັນລະຫວ່າງເຮົາກັບພະເຢຊູ. (ຕື່ມຄວາມທີ່ຂາດ)

**7** ສິນບັບຕິສະມາແລະສິນມະຫາສະໜິດ ເປັນສິ່ງທີ່ເຮົາກະທຳເພື່ອສະແດງຄວາມສຳພັນລະຫວ່າງເຮົາກັບພະເຈົ້າຢ່າງ ເປີດເຜີຍ. ສິນນັ້ນເປັນຢ່າງໃດ? (ເລືອກ)

ກ. _______ ສິ່ງທີ່ເຫັນກັບຕາໄດ້
ຂ. _______ ສິ່ງທີ່ລົງມືກະທຳ
ຄ. _______ ສິ່ງທີ່ເຮົາຮັບດ້ວຍກາຍ
ງ. _______ ສິ່ງທີ່ຄິດວາດພາບ
ຈ. _______ ສິ່ງທີ່ຝັນເຫັນ
ສ. _______ ສິ່ງທີ່ກະທຳຢ່າງລັບ ໆ

**8** ພະເຢຊູສັ່ງໃຫ້ເຮົາຍົກສັນຍາລັກສອງປະການທີ່ສະແດງຢ່າງເປີດເຜີຍ ເລື່ອງຄວາມສຳພັນລະຫວ່າງເຮົາກັບພະອົງ ຄື ສອງປະການໃດ?

______________________________ ______________________________

**9** ໃນຂໍ້ພະຄຳພີຕໍ່ໄປນີ້ ຂໍ້ໃດທີ່ກ່າວເລື່ອງ ບັບຕິສະມາ ໃຫ້ຂຽນຄຳ "ບັບຕິສະມາ" ຂ້າງຂໍ້ນັ້ນ. ຂໍ້ໃດທີ່ກ່າວເລື່ອງສິນມະຫາ ສະໜິດ ໃຫ້ຂຽນຄຳ "ມະຫາສະໜິດ" ຢູ່ຂ້າງ.

ກ. _______________ ກຈກ 2:41
ຂ. _______________ ກຈກ 2:42
ຄ. _______________ ກຈກ 2:46
ງ. _______________ ກຈກ 8:12
ຈ. _______________ ກຈກ 8:36-37
ສ. _______________ ກຈກ 20:7 ແລະ 11

**10** ໃນມັດທາຍເຫຼັ້ມທີ 5 ທີ່ທ່ານຮຽນມາກ່ອນ ບົດທີ 18 ສອນເລື່ອງສິນມະຫາສະໜິດ.
ກ. ທີ່ພະເຢຊູໃຊ້ຂອງກິນໃນສິນມະຫາສະໜິດ ສະແດງວ່າພະອົງລ້ຽງເຮົາໃນດ້ານໃດ?

______________________________________________________________

ຂ. ທີ່ຜູ້ແຕ່ງໂຕະສິນມະຫາສະໜິດ ຫັກເຂົ້າຈີ່ແລະຖອກນ້ຳອະງຸ່ນອອກສະແດງຫຍັງ?

______________________________________________________________

ຄ. ທີ່ລູດສະຕຽນເຮົາກິນເຂົ້າຈີ່ແລະຮັບດື່ມນ້ຳນັ້ນ ສະແດງວ່າເຮົາຮັບໃຜເປັນພະຜູ້ຊ່ວຍ?

______________________________________________________________

ງ. ທີ່ເຮົາຮັບຮ່ວມກັນສະແດງຫຍັງ?

______________________________________________________________

**11** ໃນບົດນັ້ນເຮົາຮຽນສະເພາະເລື່ອງສິນມະຫາສະໜິດ ແຕ່ໃນບົດນີ້ເຮົາຮຽນເລື່ອງສັນຍາລັກອີກປະການໜຶ່ງຄື ສິນ ບັບຕິສະມາ. ວັດຖຸສິ່ງຂອງໃນພິທີມະຫາສະໜິດຄືເຂົ້າຈີ່ກັບນ້ຳອະງຸ່ນ. ເພິ່ນໃຊ້ຫຍັງໃນພິທີສິນບັບຕິສະມາ? ______________________________________

**12** ນ້ຳມີປະໂຫຍດຫຼາຍຢ່າງຄື: ລ້າງໃຫ້ສະອາດ ດື່ມ ດັບໄຟ ທົດສອນ ໃນ ກຈກ 22:16 ກ່າວເຖິງປະໂຫຍດຢ່າງໃດ? ______________________________________________

**13** ກຈກ 22:16 ນັ້ນຍົກສິນບັບຕິສະມາ ມາປຽບທຽບກັບການຊຳລະລ້າງຫຍັງ? __________

**14** ສິນບັບຕິສະມາສະແດງເຖິງຄວາມຈິງດ້ານວິນຍານປະການໜຶ່ງວ່າ ພະເຢຊູເຮັດຫຍັງກັບຜິດບາບເຮົາ?_______________________________________________________

**15** ກ. ໃຫ້ອ່ານ ກຈກ 2:38 ເປໂຕກ່າວວ່າ ສິນບັບຕິສະມາສະແດງເຖິງການຍົກຫຍັງ? ______

ຂ. ແລະອີກປະການໜຶ່ງຄືຮັບພະລາຊະທານໃດ? ______________________________

**16** ກ. ກຈກ 10:47 ບອກວ່າຄົນເຫຼົ່ານັ້ນໄດ້ຮັບໃຜ? ______________________________

ຂ. ຈຶ່ງສົມຄວນຈະຮັບສິນຫຍັງ? ________________________________________

**17** ຂໍ້ພະຄຳພີທີ່ສະເໜີມາແລ້ວນີ້ສອນວ່າ ສິນບັບຕິສະມາສະແດງວ່າ ພະເຢຊູຍົກຜິດບາບຂອງເຮົາແລະສະແດງເຖິງ ພະລາຊະທານໃດ? __________________________________

**18** ພິທີສິນບັບຕິສະມາເປັນສັນຍາລັກທີ່ສະແດງເຖິງຄວາມຈິງສອງປະການໃດ? (ຕື່ມຄວາມຂາດ)

ກ. ການ ________________ ຜິດບາບຂອງ __________________ .

ຂ. ການຮັບພະລາຊະທານຄື ___________________________________________

**19** ໃຫ້ອ່ານໂລມ 6:3-5. (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. _______ ເຮົາມີຄວາມຫວັງໃນພະອົງໂດຍການຮັບສິນບັບຕິສະມາ.

ຂ. _______ ເຮົາມີລັກສະນະຄ້າຍຄືກັບພະອົງໂດຍຮັບສິນບັບຕິສະມາ.

ຄ. _______ ເຮົາເຂົ້າສະໜິດກັບພະອົງໂດຍການຮັບສິນບັບຕິສະມາ.

**20** ໃຫ້ເຮົາຮຽນໂລມ 6:3-5 ຢ່າງລະອຽດກວ່າ. (ຕື່ມຄວາມຂາດ)

ກ. ໃນຂໍ້ 3 ເຫັນວ່າຄົນທີ່ຮັບບັບຕິສະມາເຂົ້າໃນຄວາມ __________ ຂອງພະອົງ.

ຂ. ໃນຂໍ້ 4 ເຫັນວ່າເຮົາຖືກ __________________________ ກັບພະອົງ.

ຄ. ໃນຂໍ້ 5 ເຮົາເຂົ້າຕິດສະໜິດກັບພະອົງໃນການຕາຍຢ່າງໃດ ເຮົາຈະເຂົ້າສະໜິດກັບພະອົງໃນການ ____________ ຢ່າງນັ້ນ.

**21** ທີ່ເຮົາເຂົ້າຮ່ວມກັບພະອົງໃນການຕາຍ, ໃນການຖືກຝັງໄວ້ ແລະໃນການຄືນມາ ສະແດງໂດຍສັນຍາລັກໃດ? ____________________

**22** ກ. ຕາມໃນໂລມ 6:5 ພວກເຮົາຮ່ວມຢູ່ກັບພະອົງໃນການຕາຍແລະໃນການຄືນມາອີກ ເພາະເຮົາເຂົ້າຕິດ ____________________ ກັບພະອົງ. (ຕື່ມຄວາມທີ່ຂາດ)

ຂ. ສິນບັບຕິສະມາເປັນສັນຍາລັກທີ່ສະແດງວ່າເຮົາເຂົ້າຕິດສະໜິດກັບໃຜ? ____________

**23** ພິທີສິນບັບຕິສະມາ ເປັນສັນຍາລັກທີ່ສະແດງເຫດການຈິງດັ່ງຕໍ່ໄປນີ້: (ໃຫ້ຕື່ມຄວາມຂາດ)

ກ. ການຍົກ ____________________

ຂ. ພະລາຊະທານຄື ____________________

ຄ. ການເຂົ້າ ____________________



*ເຫດການຈິງ 3 ປະການນັ້ນ ເປັນການຝ່າຍພະເຈົ້າໃນຊີວິດຂອງເຮົາ ແຕ່ຍັງມີອີກຂໍ້ໜຶ່ງທີ່ວ່າໂດຍຄໍາຕອບຈາກຝ່າຍເຮົາ.*

**24** ກ. ໃຫ້ອ່ານມາລະໂກ 16:16 ຝ່າຍມະນຸດເຮົາຕ້ອງເຮັດຫຍັງກ່ອນຈະຮັບສິນບັບຕິສະມາ?

____________________

ຂ. ແລະໃນ ກຈກ 2:38 ຈຶ່ງເຮັດຫຍັງກ່ອນຮັບສິນບັບຕິສະມາ? ____________

**25** ສອງຂໍ້ພະຄໍາພີນັ້ນ ຍົກເລື່ອງການກະທໍາຕອບຂອງມະນຸດ. ດັ່ງນັ້ນເຫັນວ່າ ພິທີຮັບສິນບັບຕິສະມາສະແດງເຖິງລາຊະ ກິດຂອງພະເຈົ້າແລະການກະທໍາຂອງຝ່າຍໃດອີກ? ____________

**26** ສິນບັບຕິສະມາ ສະແດງເຖິງເຫດການຈິງ 4 ປະການໃດດັ່ງຕໍ່ໄປນີ້:

ກ. ____________________

ຂ. ____________________

ຄ. ____________________

ງ. ການ ____________ ຂອງ ____________ ເຮົາ. (ຕື່ມຄວາມຂາດ)

*ຍັງມີແນວອື່ນໆ ທີ່ມີສ່ວນໃນຄວາມໝາຍຂອງສິນບັບຕິສະມາຄື: ການບັງເກີດໃໝ່ ການເຂົ້າຮ່ວມກັບ ຄຼິດສະຕະຈັກ ໆລໆ. ໃນບົດຮຽນນີ້ ເຮົາຈະຮຽນແຕ່ເລື່ອງ 4 ປະການທີ່ຍົກມາແລ້ວນີ້.*

**27** ໃຫ້ທ່ານຊອກຫາຂໍ້ພະຄໍາພີຕໍ່ໄປນີ້ ແລ້ວຈັບຄູ່ກັບເຫດການຈິງທີ່ປາກົດມາໃນສິນບັບຕິສະມາ.

| | | |
|---|---|---|
| ກ. ____________ | ຕິດສະໜິດກັບພະອົງ | ຄລຕ 3:27 |
| ຂ. ____________ | ກະທໍາຕອບຂອງມະນຸດ | ກຈກ 9:17-18 |
| ຄ. ____________ | ພະວິນຍານບໍລິສຸດ | ຢຣ 3:23-25 |
| ງ. ____________ | ການຊໍາລະຜິດບາບ | ກຈກ 2:41 |

**28** ຄຼິດສະຕຽນເຮົາມີສິນສໍາຄັນສອງປະການໃດ? ____________________

**29** ກ. ສິນໃດທີ່ເຮົາຮັບເວລາເຂົ້າເປັນຄຼິດສະຕຽນ? ______________________________
ຂ. ສິນໃດທີ່ເຮົາຮັບຢູ່ຫຼາຍເທື່ອຕະຫຼອດຊີວິດ? ______________________________

**30** ກ. ສິນໃດທີ່ຮັບແຕ່ເທື່ອດຽວ? ______________________________
ຂ. ສິນໃດທີ່ຮັບຫຼາຍເທື່ອ? ______________________________
ຄ. ສິນໃດສະເພາະເພື່ອຄົນທີ່ເຊື່ອໃໝ່? ______________________________
ງ. ສິນໃດເພື່ອຄຼິດສະຕຽນທຸກຄົນໃນເວລາໃດກໍໄດ້? ______________________________

**31** ໃຫ້ອ່ານ ກຈກ 8:13.
ກ. ຊີໂມນຄົນນັ້ນຮັບບັບຕິສະມາບໍ່? ______________________________
ຂ. ໃຫ້ອ່ານ ກຈກ 8:18-25 ຊີໂມນນັ້ນໄດ້ລອດພົ້ນຈາກຜິດບາບບໍ່? ________________

**32** ສັງເກດເລື່ອງຊີໂມນຜູ້ເປັນໝໍເວດມົນນັ້ນ ເປັນຫຼັກຖານຢ່າງໃດ? (ເລືອກ)
ກ. _______ ທຸກຄົນທີ່ຮັບສິນບັບຕິສະມາໄດ້ລອດພົ້ນບາບ.
ຂ. _______ ການຮັບສິນບັບຕິສະມາເປັນການຮັບປະກັນວ່າໄດ້ລອດພົ້ນ.
ຄ. _______ ມີຄົນທີ່ຮັບສິນບັບຕິສະມາທີ່ບໍ່ໄດ້ລອດພົ້ນ.

**33** ໃຫ້ອ່ານລູກາ 23:40-43.
ກ. ຜູ້ຮ້າຍທີ່ຖືກຄຶງໄວ້ກັບພະເຢຊູ ມີໂອກາດຮັບສິນບັບຕິສະມາບໍ່? ________________
ຂ. ແຕ່ສ່ວນຜູ້ຮ້າຍຜູ້ທີ່ຂໍຈາກພະເຢຊູໄດ້ລອດບໍ່? ______________________________

**34** ໃຫ້ທ່ານໝາຍຂໍ້ທີ່ຈິງຕໍ່ໄປນີ້.
ກ. _______ ຄົນໃດທີ່ຮັບບັບຕິສະມາໄດ້ລອດທຸກຄົນ.
ຂ. _______ ມີບາງຄົນທີ່ໄດ້ລອດເຖິງວ່າບໍ່ໄດ້ຮັບບັບຕິສະມາກໍຕາມ.
ຄ. _______ ມີແຕ່ຄົນທີ່ບໍ່ໄດ້ຮັບບັບຕິສະມາໄດ້ລອດ.

**35** ພິທີສິນບັບຕິສະມາມີຈຸດປະສົງວ່າຢ່າງໃດ? (ເລືອກ)
ກ. _______ ເປັນເງື່ອນໄຂກ່ອນເຮົາໄດ້ລອດ
ຂ. _______ ອາດຈະມີສ່ວນໃນການໄດ້ລອດພົ້ນ
ຄ. _______ ເປັນແຕ່ສັນຍາລັກວ່າເຮົາໄດ້ລອດ

**36** ອາດຈະມີຄົນທີ່ຈະຕິວ່າ "ຖ້າພິທີສິນບັບຕິສະມາ ບໍ່ໃຫ້ໄດ້ລອດເຮົາບໍ່ຢາກຮັບດີກວ່າ". ໃຫ້ທ່ານກັບໄປເບິ່ງຮູບ "ກ" ໜ້າປົກບົດນີ້ທີ່ມີສອງຄົນຈັບມືກັນ. ການຈັບມືກັນຊື່ໆ ຈະເຮັດໃຫ້ຄົນທີ່ເຄີຍເປັນສັດຕູ ກາຍເປັນມິດສະຫາຍກັນບໍ່? ______________________________

**37** ຖ້າຢ່າງນັ້ນ ການຈັບມືກັນມີຈຸດປະສົງຢ່າງໃດ? (ເລືອກ)
ກ. _______ ເປັນຫຼັກຖານວ່າຕົກລົງກັນມາແລ້ວ
ຂ. _______ ລົບອອກສິ່ງທີ່ຕົກລົງມາແລ້ວ
ຄ. _______ ເຮັດໃຫ້ມີການຕົກລົງກັນ

**38** ເຊັ່ນດຽວກັນ ການຮັບສິນບັບຕິສະມາຢືນຢັນວ່າ ຜູ້ກ່ຽວໄດ້ໄວ້ວາງໃຈໃນ ___________ ເພື່ອໄດ້ລອດພົ້ນ. (ໃຫ້ຕື່ມຄວາມທີ່ຂາດ)

**39** ພິທີໃດເປັນຫຼັກຖານຢືນຢັນວ່າເຮົາໄດ້ລອດພົ້ນ? ______________________________

**40** ກ. ສິນບັບຕິສະມາມີຈຸດປະສົງຫຍັງ? ________________________________

ຂ. ເຮົາໄດ້ລອດໂດຍການຮັບສິນບັບຕິສະມາບໍ່? ___________________________

**41** ສິນບັບຕິສະມາ ສະແດງເຖິງເຫດການຈິງ 4 ປະການໃດ?

ກ. ______________________________________________________________

ຂ. ______________________________________________________________

ຄ. ______________________________________________________________

ງ. ______________________________________________________________

**42** ໃຫ້ທ່ານອ່ານ ມັດທາຍ 28:19 ແລະ ມາລະໂກ 16:15-16. ໃນແຕ່ລະຂໍ້ຕໍ່ໄປນີ້ ໃຫ້ທ່ານໝາຍ √ ໃສ່ ສອງຂໍ້ທີ່ກ່າວ ເລື່ອງເຫດທີ່ຄຼິດສະຕຽນຄວນຮັບສິນບັບຕິສະມາ.

ກ. _______ ເພາະເຮົາໄດ້ລອດໂດຍສິນບັບຕິສະມາ

ຂ. _______ ເພາະພະເຢຊູສັ່ງໃຫ້ຮັບ

ຄ. _______ ເພາະສິນນັ້ນຮັບປະກັນວ່າຜູ້ກ່ຽວຈະຂຶ້ນສະຫວັນຢ່າງແນ່ນອນ.

ງ. _______ ເພາະສິນນັ້ນຢືນຢັນວ່າ ເຮົາເຂົ້າເຊື່ອໃນພະເຢຊູແລ້ວ.

ຈ. _______ ເພາະຫຼາຍຄົນທີ່ເຫັນແລ້ວ ຈະນິຍົມວ່າເຮົາເປັນຄົນຊອບທຳ.

ສ. _______ ພິທີນັ້ນເປັນຫຼັກຖານວ່າ ເຮົາເປັນຄຼິດສະຕຽນຢ່າງເຂັ້ມແຂງກວ່າໝູ່.

**43** ຫ້ທ່ານບອກສາເຫດສອງປະການທີ່ຄຼິດສະຕຽນຄວນຮັບບັບຕິສະມາ.

ກ. ______________________________________________________________

ຂ. ______________________________________________________________

**44** ຄຼິດສະຕຽນສ່ວນຫຼາຍທົ່ວໂລກ ຮັບຮູ້ວ່າພະເຢຊູສັ່ງໃຫ້ຮັບສິນບັບຕິສະມາ. ໃຫ້ອ່ານມັດທາຍ 28:19. ໃນແຕ່ລະຂໍ້ຕໍ່ໄປນີ້ ໃຫ້ທ່ານໝາຍ √ ໄວ້ຂ້າງສິ່ງທີ່ຈຳເປັນໃນພິທີນັ້ນ. (ໝາຍສອງປະການໄວ້)

ກ. _____ ນ້ຳ

ຂ. _____ ເຂົ້າຈີ່

ຄ. _____ ເຫຼົ້າອະງຸ່ນ

ງ. _____ ໃຫ້ຮັບໃນນາມຂອງຜູ້ຮັບ

ຈ. _____ ໃນນາມແຫ່ງພະບິດາ ພະບຸດແລະພະວິນຍານ

ສ. _____ ໃນນາມຂອງຄຼິດສະຕະຈັກ

**45** ພິທີສິນບັບຕິສະມາກ່ຽວພັນກັບຄວາມລອດພົ້ນຢ່າງໃດ? (ຕື່ມຄວາມທີ່ຂາດ)

ເຮົາບໍ່ໄດ້ ____________ ໂດຍທາງພິທີສິນບັບຕິສະມາ ແຕ່ພິທີນັ້ນເປັນ ___________ ທີ່ສະແດງວ່າເຮົາໄດ້ລອດ ພົ້ນແລ້ວ.

**46** ແມ່ນໂດຍເຫດໃດທີ່ຄຼິດສະຕຽນຄວນຮັບສິນບັບຕິສະມາ?

ກ. ______________________________________________

ຂ. ______________________________________________

ມີສອງສິ່ງໃດທີ່ຈຳເປັນເພື່ອພິທີນັ້ນ

ຄ. ______________________________________________

ງ. ______________________________________________

*ແຕ່ລະຄຼິດສະຕະຈັກອາດຈະເຮັດພິທີບັບຕິສະມາໄປຄົນລະຢ່າງ. ມີບາງຄຼິດສະຕະຈັກທີ່ຈະໃຫ້ຜູ້ທີ່ຢາກຮັບສິນລໍຖ້າຄາວໜຶ່ງກ່ອນ. ມີບາງຄຼິດສະຕະຈັກທີ່ຈະໃຫ້ຮຽນຫຼັກສູດຄົນທີ່ເຊື່ອໃໝ່ກ່ອນ. ມີບາງຄຼິດສະຕະຈັກທີ່ຈະໃຫ້ຮັບສິນທັນທີ. ມີບາງຄຼິດສະຕະຈັກທີ່ບໍ່ໄດ້ຍົກພະນາມຂອງພະບິດາ ພະບຸດ ແລະພະວິນຍານບໍລິສຸດ ແຕ່ອີງຕາມ ກຈກ 2:38, ກຈກ 8:16, ກຈກ 10:48 ແລະ ກຈກ 19:5 ເຂົາໃຫ້ຮັບແຕ່ໃນພະນາມພະເຢຊູຄຼິດ. ຕາມໃນມັດທາຍ 28:19 ບາງຄົນກໍອາດຈະຫຍໍ້ສູດນັ້ນໄວ້ ແລະໃສ່ແຕ່ນາມຂອງພະເຢຊູ ເພື່ອຈະແຍກຈາກສິນບັບຕິສະມາຂອງໂຢຮັນ ບັບຕິສະໂຕ. ຖ້າວ່າເຂົາຈະຫຍໍ້ສູດໄວ້ເພາະເຫດນັ້ນ ແຕ່ເຂົາຍັງເຊື່ອໃນນາມພະບິດາ ພະບຸດແລະພະວິນຍານບໍລິສຸດ ເຂົາຍັງບໍ່ຜິດຈາກພະຄຳພີ.*

*ແຕ່ວ່າມີຈຳພວກໜຶ່ງທີ່ປະຕິເສດວ່າບໍ່ມີຕີເອກອະນຸພາບ ເຂົາບໍ່ເຊື່ອໃນພະວິນຍານຫຼືພະບິດາ ເຂົາວ່າມີແຕ່ ພະເຢຊູເທົ່ານັ້ນ. ຄຳສອນນັ້ນຜິດກັບພະຄຳພີທີ່ສອນເລື່ອງພະບິດາແລະພະວິນຍານ.*

**47** ມັດທາຍ 28:19 ຍົກສະເໜີສູດໃນພິທີສິນບັບຕິສະມາ. ຂໍ້ຕ່າງ ໆ ໃນກິດຈະການທີ່ອ້າງເຖິງສິນບັບຕິສະມາຫຍໍ້ ຄຳ ເວົ້ານັ້ນໄວ້ ແຕ່ຍັງຍົກນາມຂອງພະເຢຊູຄຼິດເພື່ອຈະແຍກຈາກສິນບັບຕິສະມາຂອງໂຢຮັນ. ຖ້າຈະກ່າວສູດຢ່າງ ສຳຄັນ ໃນສິນບັບຕິສະມາ ຈະກ່າວຄຳໃດ? (ເລືອກ)

ກ. ໃຫ້ຮັບໃນນາມແຫ່ງພະເຢຊູຄຼິດ

ຂ. ໃຫ້ຮັບໃນນາມແຫ່ງພະບິດາ ແລະພະວິນຍານບໍລິສຸດ

ຄ. ໃຫ້ຮັບໃນນາມແຫ່ງພະບິດາ ພະບຸດ ແລະພະວິນຍານບໍລິສຸດ

**48** ກ. ຖ້າຈະໃຫ້ມີພິທີບັບຕິສະມາ ຕ້ອງມີວັດຖຸຢ່າງໃດ? ____________________

ຂ. ສິນຄວນໃຫ້ຮັບໃນນາມໃດ? ______________________________

______________________________________________

*ເພື່ອໃຫ້ປຶກສາຫາລືກັນໃນປະຊຸມ:*

*ມີວິທີທາງຫຼາຍຢ່າງທີ່ຈະໃຫ້ຮັບສິນບັບຕິສະມາຄື:*

* *ຮັບໃນຫ້ວຍ ຫຼື ແມ່ນໍ້າ*
* *ຮັບໃນທະເລສາບ ຫຼື ສະນໍ້າ*
* *ຮັບໃນອ່າງ (ຂ້າງໃນຕຶກ ຫຼືຂ້າງນອກຕຶກກໍໄດ້)*
* *ມີບາງຄົນທີ່ເອົານໍ້າຖອກຫຼືຫົດໃສ່ຫົວ*

*ມີບາງຈໍາພວກແທນທີ່ຈະຖະຫວາຍເດັກນ້ອຍທີ່ເກີດມາໃໝ່ ເຂົາໃຫ້ຮັບສິນບັບຕິສະມາ. ໃຫ້ທ່ານຮຽນຮູ້ເລື່ອງນະໂຍບາຍໃນຄຼິດສະຕະຈັກຂອງທ່ານເອງ ເພື່ອຈະຮູ້ກົດລະບຽບເລື່ອງພິທີຮັບສິນແລະ ເງື່ອນໄຂດ້ວຍ.*

## *ໃຫ້ເສັງບົດທີ 10 ນີ້!*

**ຄໍາຕອບ:**

**1** *ກ. ເຢລູຊາເລັມ ຂ. ກິດຈະການ ຄ. ພະວິນຍານບໍລິສຸດ ງ. ວັນເພັນເຕຄໍສະເຕ*

**2** *ກ. ປະມານ 3000 ຄົນ ຂ. ບັບຕິສະມາ*

**3** *ກ. ເຢລູຊາເລັມ ຂ. 3000 ຄົນ*

**4** *ຮູບ "ກ" ສະແດງເຖິງມິດສະຫາຍ ຮູບ "ຂ" ສະແດງເຖິງການແຕ່ງງານ*

**5** *ກ. ການເປັນມິດສະຫາຍກັນ ຂ. ການແຕ່ງງານ*

**6** *ສັນຍາລັກ*

**7** *ກ ຂ ຄ ຖືກ ສິນມະຫາສະໜິດ*

**8** *ສິນບັບຕິສະມາ ສິນມະຫາສະໜິດ*

**9** *ກ. ບັບຕິສະມາ ຂ. ມະຫາສະໜິດ ຄ. ມະຫາສະໜິດ ງ. ບັບຕິສະມາ*
*ຈ. ບັບຕິສະມາ ສ. ມະຫາສະໜິດ*

**10** *ກ. ຈິດວິນຍານ ຂ. ພະເຢຊູຕາຍເພື່ອເຮົາ ຄ. ຮັບພະເຢຊູ*
*ງ. ເຮົາເປັນຄອບຄົວດຽວໃນພະເຈົ້າ*

**11** *ນໍ້າ*

**12** *ຊໍາລະລ້າງ*

**13** *ຄວາມຜິດບາບ*

**14** *ຊໍາລະ*

**15** *ກ. ໂທດບາບ ຂ. ພະວິນຍານບໍລິສຸດ*

**16** *ກ. ພະວິນຍານບໍລິສຸດ ຂ. ສິນບັບຕິສະມາ*

**17** *ພະວິນຍານບໍລິສຸດ*

**18** *ກ. ຊໍາລະ... ເຮົາ ຂ. ພະວິນຍານບໍລິສຸດ*

**19** *ຄ ຖືກ*

**ຄຳຕອບ (ຕໍ່):**

**20** *ກ. ຕາຍ ຂ. ຝັງໄວ້ ຄ. ຄືນມາ*

**21** *ສິນບັບຕິສະມາ*

**22** *ກ. ສະໜິດ ຂ. ພະເຢຊູ*

**23** *ກ. ຜິດບາບຂອງເຮົາ ຂ. ພະວິນຍານບໍລິສຸດ ຄ. ຕິດສະໜິດກັບພະເຢຊູ*

**24** *ກ. ເຊື່ອ ຂ. ຖິ້ມໃຈເກົ່າເອົາໃຈໃໝ່*

**25** *ມະນຸດເຮົາ*

**26** *ກ. ການຍົກຜິດບາບຂອງເຮົາ ຂ. ພະລາຊະທານຄືພະວິນຍານ*
*ຄ. ການເຂົ້າຕິດສະໜິດກັບພະເຢຊູ ງ. ກະທຳຕອບ... ມະນຸດ*

**27** *ກ. ຄລຕ 3:27 ຂ. ກຈກ 2:41 ຄ. ກຈກ 9:17-18 ງ. ຢຮ 3:23-25*

**28** *ສິນບັບຕິສະມາ ສິນມະຫາສະໜິດ*

**29** *ກ. ສິນບັບຕິສະມາ ຂ. ສິນມະຫາສະໜິດ*

**30** *ກ. ບັບຕິສະມາ ຂ. ມະຫາສະໜິດ ຄ. ບັບຕິສະມາ ງ. ມະຫາສະໜິດ*

**31** *ກ. ຮັບ ຂ. ບໍ່*

**32** *ຄ ຖືກ*

**33** *ກ. ບໍ່ມີໂອກາດ ຂ. ໄດ້ລອດ*

**34** *ຂ ຖືກ*

**35** *ຄ ຖືກ*

**36** *ບໍ່*

**37** *ກ ຖືກ*

**38** *ພະເຢຊູ*

**39** *ບັບຕິສະມາ*

**40** *ກ. ເປັນສັນຍາລັກວ່າເຮົາໄດ້ລອດພົນ ຂ.ໄດ້ລອດ*

**41** *ກ. ການຍົກຜິດບາບ ຂ. ພະວິນຍານ ຄ. ການເຂົ້າຕິດສະໜິດກັບພະອົງ*
*ງ. ການກະທຳຕອບຂອງເຮົາ*

**42** *ຂ ງ ຖືກ*

**43** *ກ. ພະເຢຊູສັ່ງໃຫ້ຮັບ ຂ. ເພາະເປັນທີ່ຢືນຢັນວ່າເຮົາເຊື່ອໃນພະເຢຊູແລ້ວ.*

**44** *ກ ຈ ຖືກ*

**45** *ລອດພົນ... ສັນຍາລັກ (ຫຼັກຖານກໍໄດ້)*

**46** *ກ. ພະເຢຊູສັ່ງໃຫ້ຮັບ ຂ. ເປັນທີ່ຢືນຢັນວ່າເຮົາເຊື່ອໃນພະເຢຊູ ຄ. ນ້ຳ*
*ງ. ທີ່ຈະຮັບໃນນາມແຫ່ງພະບິດາ ພະບຸດ ແລະພະວິນຍານບໍລິສຸດ*

**47** *ຄ ຖືກ*

**48** *ກ. ນ້ຳ ຂ. ໃນນາມແຫ່ງ ພະບິດາ ພະບຸດ ແລະພະວິນຍານບໍລິສຸດ*